**ມິຊຊາອາທິດທີ 2 ກຳນົດທຳມະດາ**

**ວັນທີ 15 ມັງກອນ 2023**



**ພຣະວໍລະສານໂດຍນັກບຸນຢວງ**

ໃນເວລານັ້ນ, ຢວງບາບຕິສຕາເຫັນພຣະເຢຊູເຈົ້າສະເດັດມາຫາຈຶ່ງເວົ້າວ່າ: "ນີ້ແມ່ນພຣະຊຸມພານ້ອຍຂອງພຣະເຈົ້າຜູ້ຍົກບາບໂທດຂອງໂລກ; ນີ້ແມ່ນຜູ້ທີ່ຂ້າພະເຈົ້າໄດ້ບອກໄວ້ວ່າ: ຈະມີຜູ້ໜຶ່ງມານຳຫລັງຂ້າພະເຈົ້າໄດ້ລື່ນຂ້າພະເຈົ້າ. ຍ້ອນວ່າ ພຣະອົງເປັນຢູ່ກ່ອນຂ້າພະເຈົ້າແລ້ວ. ຂ້າພະເຈົ້າເອງບໍ່ໄດ້ຮູ້ຈັກພຣະອົງ ແຕ່ເພື່ອໃຫ້ພຣະອົງນັ້ນປາກົດຕົວຕໍ່ຊົນຊາດອິສຣາແອນ ຂ້າພະເຈົ້າຈຶ່ງມາທຳພິທີລ້າງດ້ວຍນໍ້າ." ຢວງໄດ້ຢັ້ງຢືນເປັນພະຍານດັ່ງນີ້ວ່າ: "ຂ້າພະເຈົ້າໄດ້ເຫັນພຣະຈິດສະເດັດລົງມາຈາກຟ້າເໝືອນດັ່ງນົກກາງແກ ແລ້ວສະຖິດຢູ່ເໜືອພຣະອົງນັ້ນ. ຂ້າພະເຈົ້າເອງບໍ່ໄດ້ຮູ້ຈັກພຣະອົງ, ແຕ່ພຣະອົງຜູ້ໃຊ້ຂ້າພະເຈົ້າມາທຳພິທີລ້າງໄດ້ບອກຂ້າພະເຈົ້າວ່າ: "ເຈົ້າເຫັນພຣະຈິດສະເດັດລົງມາຢູ່ເໜືອຜູ້ໃດ ແມ່ນຜູ້ນັ້ນແລ້ວຈະໂຜດສົນລ້າງໃນພຣະຈິດເຈົ້າ". ຂ້າພະເຈົ້າໄດ້ເຫັນແລະຂໍຢັ້ງຢືນວ່າ: "ພຣະອົງຜູ້ນີ້ແລ້ວແມ່ນພຣະບຸດຂອງພຣະເປັນເຈົ້າ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ຫລັງຈາກທີ່ພຣະກຣິສຕະຈັກໄດ້ສະຫລອງພຣະກຣິສໂຕຮັບສິນລ້າງຈາກທ່ານຢວງທີ່ແມ່ນ້ຳຢໍແດນ. ວັນນີ້, ພວກເຮົາໄດ້ກ້າວເຂົ້າສູ່ອາທິດທີສອງກຳນົດທຳມະດາຂອງປີພິທີກຳທີ່ໜຶ່ງ, ປີ A. ເພາະກຳນົດພຣະກຣິສຕະສົມພົບ, ກຳນົດໂນແອນໄດ້ຈົບສິ້ນລົງໃນວັນສະຫລອງພຣະກຣິສໂຕຮັບສິນລ້າງ. ວັນບຸນໂນແອນແມ່ນເທວະດາຈາກສະຫວັນໄດ້ໄຂສຳແດງໃຫ້ພວກລ້ຽງແກະຮູ້ວ່າ ເດັກນ້ອຍທີ່ຫົ່ມແພນອນຢູ່ໃນຮາງຫຍ້ານັ້ນແມ່ນພຣະບຸດຂອງພຣະເຈົ້າລົງມາເກີດເປັນມະນຸດ. ສ່ວນວັນທີ່ພຣະເຢຊູເຈົ້າຮັບສິນລ້າງແມ່ນສຽງຂອງພຣະບິດາທີ່ມາຈາກສະຫວັນເຜີຍສຳແດງໃຫ້ຜູ້ທີ່ຢູ່ໃນເຂດແມ່ນ້ຳຢໍແດນຮູ້ວ່າ ພຣະເຢຊູແມ່ນພຣະບຸດສຸດທີ່ຮັກຂອງພຣະອົງ.

ສ່ວນວັນນີ້ອາທິດທີສອງກຳນົດທຳມະດາແມ່ນນັກບຸນຢວງບັບຕິສຕາໃນພຣະວໍລະສານທີ່ປະກາດຢັ້ງຢືນໃຫ້ພວກເຮົາຮູ້ວ່າ: ພຣະເຢຊູເຈົ້າແມ່ນພຣະບຸດຂອງພຣະເຈົ້າແທ້. ແລະແມ່ນພຣະອົງນີ້ແລທີ່ຈະຊຳລະລ້າງບາບມະນຸດດ້ວຍນ້ຳແລະພຣະຈິດເຈົ້າ. ພຣະອົງແມ່ນພຣະຊຸມພານ້ອຍທີ່ຈະຖືກຂ້າບູຊາເພື່ອຊຳລະລ້າງບາບມະນຸດ.ເມື່ອໄດ້ຍິນຄຳປ່າວປະກາດຂອງນັກບຸນຢວງບັບຕິສຕາ ຫລາຍຄົນກໍໄດ້ກັບໃຈແລະມາເປັນສິດຂອງພຣະເຢຊູເຈົ້າ. ສິ່ງທີ່ກ່າວມານີ້ຊ່ວຍພວກເຮົາໃຫ້ເຂົ້າໃຈຄວາມໝາຍຄວາມສຳຄັນຂອງກຳນົດທຳມະດາ,ອັນແມ່ນກຳນົດແຫ່ງການປະກາດເປັນພິຍານເຖິງພຣະເຢຊູພຣະບຸດພຣະເຈົ້າ. ພຣະອົງມາເພື່ອຊ່ວຍພວກເຮົາໃຫ້ຫລົດຈາກບາບແລະໄດ້ຮອດຊີວິດ. ສ່ວນພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າຜ່ານທາງສິນລ້າງບາບ. ພວກເຮົາໄດ້ປ່າວປະກາດແລະເປັນພິຍານເຖິງພຣະອົງໃນຊີວິດຂອງພວກເຮົາບໍ? ພວກເຮົາໄດ້ຮັບຮູ້ວ່າພຣະອົງແມ່ນພຣະບຸດສຸດທີ່ຮັກຂອງພຣະບິດາເຈົ້າບໍ? ພວກເຮົາໄດ້ເຊື່ອເຖິງການສະເດັດມາຂອງພຣະອົງເພື່ອຊຳລະລ້າງບາບໂທດຂອງພວກເຮົາບໍ? ຖ້າພວກເຮົາບໍ່ເຊື່ອຢ່າງແທ້ຈິງໃນຕົວພຣະອົງແລ້ວ, ພວກເຮົາຈະເປັນພິຍານເຖິງພຣະອົງໄດ້ຢ່າງໃດ? ຖ້າພວກເຮົາບໍ່ໄດ້ພົບພໍ້ພຣະອົງໃນຊີວິດຂອງພວກເຮົາແລ້ວ, ພວກເຮົາຈະປ່າວປະກາດເຖິງພຣະອົງໄດ້ຢ່າງໃດ?

**ພາວະນາ**

ໂອພຣະເຢຊູເຈົ້າ,ພຣະຊຸມພານ້ອຍຜູ້ຍົກບາບໂທດຂອງໂລກ, ໂຜດຍົກບາບແຫ່ງການຂາດຄວາມເຊື່ອໃຫ້ລູກດ້ວຍ. ໂຜດຊ່ວຍລູກໃຫ້ເຊື່ອຢ່າງແທ້ຈິງວ່າ ພຣະອົງແມ່ນພຣະບຸດຂອງພຣະເຈົ້າທີ່ມາໃນໂລກເພື່ອຊ່ວຍລູກແລະທຸກຄົນໃຫ້ຫລົດພົ້ນຈາກບາບ ແລະໄດ້ຮັບຊີວິດນິລັນດອນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ